# ລາວ-ຈີນ ເປັນບ້ານໃກ້ເຮືອນຄຽງທີ່ດີຕໍ່ກັນ

ເດືອນເມສາປີ 2019, ລາວ ແລະ ຈີນ ໄດ້ລົງນາມໃນ "ແຜນແມ່ບົດວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳລາວ-ຈີນ ລະຫວ່າງພັກກອມມູນິດຈີນ ແລະ ພັກປະຊາຊົນປະຕິວັດລາວ". 5 ປີຜ່ານມາ, ສອງຝ່າຍໄດ້ຮ່ວມແຮງຮ່ວມໃຈກັນ ແລະ ຄຽງບ່າຄຽງໄຫຼ່ກັນ, ໄດ້ສ້າງສະພາບການໃໝ່ແຫ່ງການພົວພັນລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ໄດ້ເພີ່ມພະລັງຂັບເຄື່ອນໃຫ້ແກ່ສັນຕິພາບ, ສະຖຽນລະພາບ, ການພັດທະນາ ແລະ ຄວາມຈະເລີນຮຸ່ງເຮືອງຂອງພາກພື້ນ. ໃຫ້ພວກເຮົາພ້ອມກັນທວນຄືນ 4 ເຫດການ ເພື່ອບັນຍາຍເຖິງເລື່ອງຈິງທີ່ສອງປະເທດລາວ ແລະ ຈີນ ຮ່ວມຊາຕາກຳດຽວກັນ ແລະ ເສີມສ້າງມິດຕະພາບຖານບ້ານໃກ້ເຮືອນຄຽງທີ່ດີຕໍ່ກັນ.

## ໄດ້ບົດຮຽນອັນລ້ຳຄ່າ ຜ່ານຊຸດຝຶກອົບຮົມຄັ້ງໜຶ່ງ



ຊຸດຝຶກອົບຮົມ ໃນເດືອນມິຖຸນາ 2023 ໄດ້ເຮັດໃຫ້ ທ່ານ ວິໄຊ ຂຳຕະກຸນ ຮອງຫົວໜ້າກົມທ້ອງຖິ່ນຮາກຖານ ຫ້ອງວ່າການສູນກາງພັກ ປະຊາຊົນປະຕິວັດລາວ ມີຄວາມຮູ້ສຶກຢ່າງເລິກເຊິ່ງ. ນັບແຕ່ວັນທີ 27 ມີນາຫາ ວັນທີ 3 ເມສາ 2023, ທ່ານ ຫວັງໜີງ (Wang Ning) ເລຂາຄະນະພັກແຂວງຢຸນນານ ໄດ້ນຳພາຄະນະຜູ້ແທນມິດຕະພາບແຂວງຢຸນນານເດີນທາງໄປຢ້ຽມຢາມ 3 ປະເທດ ຄື: ຫວຽດນາມ, ລາວ ແລະ ມຽນມາ. ໃນໄລຍະຢ້ຽມຢາມປະເທດລາວ, ເຈົ້າໜ້າທີ່ຝ່າຍຢຸນນານກ່າວວ່າ, ຈະຖອດຖອນບົດຮຽນກັບຝ່າຍລາວຕື່ມອີກ ໂດຍຜ່ານການຈັດຊຸດຝຶກອົບຮົມ.

ພາຍຫຼັງສິ້ນສຸດການຢ້ຽມຢາມລາວແລ້ວ, ໂດຍຜ່ານການກະກຽມເປັນເວລາ 2 ເດືອນ, ຊຸດຝຶກອົບຮົມພະນັກງານພັກ ແລະ ລັດຊຸດທຳອິດສົກປີ 2023 ໄດ້ຈັດຂຶ້ນຢູ່ນະຄອນຄຸນໝິງ ແລະ ກິ່ງແຂວງປົກຄອງຕົນເອງເຜົ່າລື້ສິບສອງພັນນາ ລະຫວ່າງວັນທີ 11 ຫາ 15 ມິຖຸນາປີດຽວກັນ ໂດຍມີພະນັກງານພັກ ແລະ ລັດ 25 ທ່ານ ຈາກສູນກາງ ແລະ ທ້ອງຖິ່ນຂອງລາວໄດ້ເຂົ້າຮ່ວມ ເຊິ່ງແມ່ນຊຸດຝຶກອົບຮົມຊຸດທຳອິດສຳລັບພະນັກງານພັກ ແລະ ລັດຕ່າງປະເທດຂອງແຂວງຢຸນນານ ພາຍຫຼັງເກີດການແຜ່ລະບາດຂອງພະຍາດໂຄວິດ-19.

ທ່ານ ວິໄຊ ຂຳຕະກຸນ ຫົວໜ້າຝ່າຍລາວກ່າວວ່າ: "ຊຸດຝຶກອົບຮົມຄັ້ງນີ້ ໄດ້ໃຊ້ທິດສະດີ ແລະ ພຶດຕິກຳປະສານສົມທົບກັນ, ມີເນື້ອໃນອຸດົມສົມບູນ ແລະ ຖືກເປົ້າໝາຍທີ່ສຸດ. ພວກເຮົາໄດ້ບົດຮຽນທີ່ດີຫຼາຍຢ່າງ." ທ່ານກ່າວຕື່ມວ່າ, ຈີນໄດ້ປະຕິບັດນະໂຍບາຍຫຼຸດຜ່ອນຄວາມທຸກຍາກຢ່າງຖືກຕ້ອງແມ່ນຢຳ ແລະ ລຶບລ້າງຄວາມທຸກຍາກດ້ວຍການພັດທະນາ, ເປັນບົດຮຽນທີ່ດີສຳລັບ ສປປ ລາວ.

ທ່ານ ບົວຄຳ ສີສີງຄາມ ນັກສຳມະນາກອນ, ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງວຽງຈັນ ກ່າວວ່າ: "ຈີນ ມີສຸພາສິດວ່າ, ຖ້າຢາກສ້າງຄວາມຮັ່ງມີ ຕ້ອງສ້າງທາງມາກ່ອນ. ທາງລົດໄຟລາວ-ຈີນ ເປັນເສັ້ນທາງສ້າງຄວາມຮັ່ງມີ ແລະ ເສັ້ນທາງແຫ່ງຄວາມຜາສຸກສຳລັບປະຊາຊົນລາວເຮົາ." ທ່ານກ່າວຕື່ມວ່າ, ທາງລົດໄຟສາຍນີ້ໄດ້ເປີດປະຕູໃຫ້ແກ່ປະຊາຊົນລຽບຕາມທາງລົດໄຟໃນການຕິດຕໍ່ພົວພັນກັບໂລກພາຍນອກ ແລະ ໄດ້ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນທ້ອງຖິ່ນໂດຍທາງກົງ ແລະ ທາງອ້ອມ ເປັນຈຳນວນຫຼວງຫຼາຍ.

## ແຂ່ງຂັນເຕະບານມິດຕະພາບ ເຮັດໃຫ້ພວກເຮົາກາຍເປັນເພື່ອນມິດທີ່ດີ



ແລ່ນ, ສົ່ງບານ, ຍິງປະຕູ! ສອງຝ່າຍໄດ້ແຂ່ງຂັນກັນຢູ່ໃນເດີ່ນບານສີຂຽວ. ນີ້ແມ່ນກິດຈະກຳແລກປ່ຽນວັດທະນະທຳ ແລະ ກິລາ ລະຫວ່າງ 4 ປະເທດໃນໄຕມາດທີ 2 ຂອງປີ 2023 ພາຍໃຕ້ຂອບລາດຕະເວນ ແລະ ປະຕິບັດກົດໝາຍຮ່ວມຕາມລຳແມ່ນ້ຳຂອງລະຫວ່າງ 4 ປະເທດ ຄື ຈີນ, ລາວ, ມຽນມາ ແລະ ໄທ ທີ່ຈັດຂຶ້ນຢູ່ມຽນມາ ໃນວັນທີ 29 ມິຖຸນາ 2023. ເຈົ້າໜ້າທີ່ປະຕິບັດກົດໝາຍຈາກ 4 ປະເທດ ໄດ້ປ່ຽນຊຸດກິລາ, ເພີ່ມສັນຍະລັກ ແລະ ຄວາມໄວ້ເນື້ອເຊື່ອໃຈກັນທ່າມກາງບັນຍາກາດການແຂ່ງຂັນເຕະບານມິດຕະພາບ.

ທ່ານ ພັນໄທ ຄຳນຽນ ສີສຸດອນ ຫົວໜ້າຫ້ອງການກອງບັນຊາການປ້ອງກັນຄວາມສະຫງົບແຂວງບໍ່ແກ້ວ ກ່າວວ່າ: "ກິດຈະກຳແລກປ່ຽນວັດທະນະທຳ ແລະ ກິລາຈັດຂຶ້ນປີລະ 4 ຄັ້ງ,ພາກສ່ວນປະຕິບັດກົດໝາຍຂອງ 4 ປະເທດ ພັດປ່ຽນກັນເປັນເຈົ້າພາບຈັດຂຶ້ນ, ຄັ້ງຜ່ານມານີ້ ຈັດຂຶ້ນຢູ່ປະເທດລາວ." ທ່ານກ່າວຕື່ມວ່າ: "ພວກເຮົາໄດ້ຜູກມິດສຳພັນກັບຜູ້ແທນເຂົ້າຮ່ວມການແຂ່ງຂັນຂອງຫຼາຍປະເທດ, ຄົນທັງຫຼາຍໄດ້ຖອດຖອນບົດຮຽນເຊິ່ງກັນ ແລະ ກັນເລື້ອຍໆ, ກໍໄດ້ຊຸກຍູ້ວຽກງານລາດຕະເວນ ແລະ ປະຕິບັດກົດໝາຍໃນຕໍ່ໜ້າເຊັ່ນກັນ."

ການລາດຕະເວນ ແລະ ປະຕິບັດກົດໝາຍຮ່ວມຕາມລຳແມ່ນ້ຳຂອງລະຫວ່າງ 4 ປະເທດຈີນ, ລາວ, ມຽນມາ ແລະ ໄທ ໄດ້ເລີ່ມຂຶ້ນຢ່າງເປັນທາງການໃນປີ 2011, ມາຮອດເດືອນເມສາ ປີ 2024, ໄດ້ສຳເລັດການປະຕິບັດກົດໝາຍໄປແລ້ວ 138 ຄັ້ງ.

## ໂຄງການຮ່ວມມືລະຫວ່າງລາວ-ຈີນ ໄດ້ຊ່ວຍປະຊາຊົນບັນລຸຄວາມຝັນ



ນາງສີສະຫຼຽວ ທຳມະທອງສີ ແລະ ທ່ານຄຳພອນ ງ້າວປະເສີດ ເຊິ່ງເປັນຄູ່ຜົວເມຍໄດ້ເປີດຣີສອດ ແລະ ຮ້ານອາຫານຢູ່ນະຄອນ-ຫຼວງພະບາງ. ໃນແຕ່ລະມື້ ພໍຮອດຍາມແລງ, ແສງໄຟຟ້າຮຸ່ງສະຫວ່າງສະໄຫວຢູ່ຕາມແຄມແມ່ນ້ຳຂອງ, ລູກຄ້າໄດ້ນັ່ງເຕັມໃນຮ້ານແຄມຂອງ.

ນາງ ສີສະຫຼຽວ ກ່າວວ່າ: "ຂ້ອຍຮູ້ສຶກມີຄວາມສຸກຫຼາຍເນື່ອງຈາກວ່າໃນຊຸມປີຜ່ານມາ, ການສະໜອງໄຟຟ້າມີຄວາມໝັ້ນທ່ຽງ, ລູກຄ້າກໍເຂົ້າມາໃນຮ້ານຫຼາຍກວ່າເກົ່າ. ທາງລົດໄຟໄດ້ເປີດນຳໃຊ້ແລ້ວ, ນັກທ່ອງທ່ຽວທີ່ມາທ່ຽວຫຼວງພະບາງກໍຫຼາຍກວ່າເກົ່າ!" ປີ 2015, ໂຄງການກໍ່ສ້າງຕາຂ່າຍໄຟຟ້າພາກເໜືອລາວ 230 ກິໂລໂວນ ທີ່ລົງທຶນໂດຍລັດວິສາຫະກິດໄຟຟ້າລາວ ແລະ ຮັບເໝົາກໍ່ສ້າງໂດຍບໍລິສັດຕາຂ່າຍໄຟຟ້າພາກໃຕ້ຈີນ ຢຸນນານສາກົນ ໄດ້ເລີ່ມປະຕິບັດງານຢ່າງເປັນທາງການ. ວັນທີ 13 ເມສາ 2023, ຂະບວນລົດໄຟໂດຍສານສາກົນຕາມທາງລົດໄຟລາວ-ຈີນ ໄດ້ເປີດບໍລິການຢ່າງເປັນທາງການ, ນັກທ່ອງທ່ຽວສາກົນທີ່ມາພັກເຊົາ ແລະ ກິນເຂົ້າໃນຮ້ານສີສະຫຼຽວກໍນັບມື້ນັບຫຼາຍຂຶ້ນ.

ການຮ່ວມມືດ້ານພະລັງງານສີຂຽວແບບນີ້ຍັງມີຫຼາຍ. ເດືອນທັນວາ ປີ 2023, ບໍລິສັດສາຍສົ່ງໄຟຟ້າແຫ່ງຊາດລາວ ທີ່ບໍລິສັດຕາຂ່າຍໄຟຟ້າພາກໃຕ້ຈີນ ແລະ ລັດວິສາຫະກິດໄຟຟ້າລາວ ຮ່ວມກັນລົງທຶນນັ້ນ ໄດ້ເລີ່ມປະຕິບັດງານຢ່າງເປັນທາງການ.

ທ່ານ ສູຢູສຽວ (Xu Yu xiao) ຜູ້ອຳນວຍການໃຫຍ່ ພະແນກພັດທະນາຍຸດທະສາດຂອງບໍລິສັດຕາຂ່າຍໄຟຟ້າພາກໃຕ້ຈີນ ຢຸນນານສາກົນ ກ່າວວ່າ: "ໃນການຄ້າຂາຍປະລິມານໄຟຟ້າລະຫວ່າງບໍລິສັດພວກເຮົາກັບປະເທດຕາມລ້ອງແມ່ນ້ຳຂອງ, ພະລັງງານສະອາດໄດ້ກວມຫຼາຍກວ່າ 90% ເຊິ່ງໄດ້ຊຸກຍູ້ການຈັດສັນພະລັງງານສະອາດຂ້າມພາກພື້ນໃຫ້ໄດ້ດີກວ່າເກົ່າ ແລະ ໄດ້ເພີ່ມພະລັງຂັບເຄື່ອນສີຂຽວເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງພາກພື້ນນີ້."

## ພັດທະນາແພດແຜນບູຮານ ແລະ ຢາພື້ນເມືອງ ເພື່ອຄວາມສຸກ ແລະ ສຸຂະພາບຂອງປະຊາຊົນ




ຍ້ອນວ່າແຂວງຢຸນນານ ແລະ ປະເທດລາວມີພູຜາ ແລະ ແມ່ນ້ຳຕິດຈອດກັນ, ສອງຝ່າຍມີແຫຼ່ງຢາພື້ນເມືອງທີ່ຄ້າຍຄືກັນ.

ໃນປີ 2021, ພາຍຫຼັງໂຄງການໄລຍະ 1 ຂອງການກໍ່ສ້າງ "ເຂດສາທິດນຳໜ້າການບໍລິການດ້ານສາທາລະນະສຸກຂ້າມຊາດລາວ-ຈີນ" ໄດ້ລົງມືກໍ່ສ້າງຢູ່ເມືອງຫຼ້າ ແຂວງຢຸນນານແລ້ວ, ໂຮງໝໍປະຊາຊົນເມືອງຫຼ້າໄດ້ສ້າງ "ສູນການບໍລິການດ້ານສາທາລະນະສຸກ ແລະ ສຸຂະພາບຂັ້ນຮາກຖານລາວ-ຈີນ" ກັບໂຮງໝໍແຂວງຫຼວງນ້ຳທາ, ໂຮງໝໍແຂວງຜົ້ງສາລີ, ໂຮງໝໍເມືອງຍອດອູ, ໂຮງໝໍເມືອງຫຼວງນ້ຳທາ, ໂຮງໝໍເມືອງສິງ ແລະ ໂຮງໝໍເມືອງລອງ ເຊິ່ງໄດ້ບັນລຸການເຊື່ອມຈອດກັນດ້ານການບໍລິການສາທາລະນະສຸກຢູ່ເຂດຊາຍແດນລາວ-ຈີນ.

ເດືອນກັນຍາ ປີ 2023, ມະຫາວິທະຍາໄລຢາພື້ນເມືອງຈີນຢຸນນານ (Yunnan University of Chinese Medicine) ໄດ້ຮ່ວມມືກັບສະຖາບັນການແພດ ແລະ ການຢາພື້ນເມືອງ ກະຊວງສາທາລະນະສຸກລາວ ໂດຍໄດ້ສ້າງຕັ້ງສູນການຮ່ວມມືການແພດ ແລະ ການຢາພື້ນເມືອງລາວ-ຈີນ ຢູ່ນະຄອນຫຼວງວຽງຈັນ. ເດືອນຕຸລາປີດຽວກັນ, ທ່ານໝໍ 12 ທ່ານຂອງລາວໄດ້ເດີນທາງມາເຖິງມະຫາວິທະຍາໄລຢາພື້ນເມືອງຈີນຢຸນນານ ເພື່ອຮຽນເຕັກນິກແພດແຜນຈີນ ທັງທິດສະດີ ແລະ ການປະຕິບັດຕົວຈິງ ເຊັ່ນ: ການຝັງເຂັມ ແລະ ນວດແຜນຈີນ, ສິນິທາຄົມນວດຈຸດສຳຄັນຕາມເສັ້ນປະສາດສຳລັບເດັກນ້ອຍ ແລະ ອື່ນໆ ທີ່ເໝາະສົມໃຊ້ຢູ່ປະເທດລາວ. ປັດຈຸບັນ, ທ່ານໝໍເຫຼົ່ານີ້ໄດ້ໃຫ້ບໍລິການດ້ານແພດແຜນຈີນຢູ່ໂຮງໝໍໃຫຍ່ແຫ່ງຕ່າງໆໃນນະຄອນຫຼວງວຽງຈັນ.

ທ່ານ ດຣ. ບຸນເລື່ອນ ດວງເດືອນ ຫົວໜ້າສະຖາບັນການແພດ ແລະ ການຢາພື້ນເມືອງ ກະຊວງສາທາລະນະສຸກລາວ ກ່າວວ່າ: "ພວກເຮົາໄດ້ສະເໜີຕໍ່ມະຫາວິທະຍາໄລຢາພື້ນເມືອງຈີນຢຸນນານ ເພື່ອຊ່ວຍປະເທດລາວ ອົບຮົມບົ່ມສ້າງຊັບພະຍາກອນມະນຸດດ້ານແພດແຜນບູຮານ. ຫວັງວ່າ, ສອງຝ່າຍ ຈະສາມາດດຳເນີນການຮ່ວມມືຕົວຈິງ ເພື່ອພັດທະນາແພດແຜນບູຮານ ແລະ ຢາພື້ນເມືອງລາວ ເພື່ອສ້າງຄວາມສຸກໃຫ້ແກ່ປະຊາຊົນລາວ."

ພາບໂດຍ: ສຳນະຂ່າວຂ່າວຊິນຮວາ, ມະຫາວິທະຍາໄລຊົນເຜົ່າຢຸນນານ, ຫ້ອງການຖະແຫຼງຂ່າວເມືອງຫຼ້າ

ຂ່າວ: Han Chengyuan, Qin Xuedan, Guo Yao, Chen Chen, Yang Chunmei

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້–ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com